*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 89-95*
*https://doi.org/10.69692/SUJMRD10special89*

# The factors affect towards the competitive advantage of tourism services Business in Luang Prabang City, Luang Prabang Province In the case of Hotel-Resort Business

**Poutthalack Phanthouamath[1], Soudtida Hoongsengpha[2], Dalounny Indavong[3]**

*Organization of Resources Management Program, Research an Academic Services Office, Souphanouvong University, Lao PDR*

*[1]**Correspondence:** Poutthalack Phanthouamath, Confucius institute of Souphanouvong University, Tel: +856 20 5467666, Email: Poutthalack@su.edu.la*
*[2]Confucius institute of Souphanouvong University*
*[3]Financial office, Rector's office, Souphanouvong University*

***Submitted: December 05, 2024***

***Revised: December 15, 2024***

***Accepted: December 31, 2024***

**Abstract**

The objectives of this research were to 1) study the competitive advantage of tourism services business in Luang Prabang City and 2) to analysis the factors affect towards the competitive advantage of tourism services Business in Luang Prabang City, Luang Prabang Province, the research was conducted by using a questionnaire as an instrument for collecting data from 95 hotel and resort executives/Entrepreneurs in the Luang Prabang district of Luang Prabang Province. The Cronbach alpha reliability coefficient was 0.986, the statistics used for data analysis were frequency, percentage, mean, standard deviation, Multiple Regression analysis.

The results revealed that: 1) the hotel-resort business in the Luang Prabang City was a competitive advantage at high level, in which the competitive advantage at a highest level, the first factor was the advantage in terms of quick response Leadership and the operation with a high level of competitive advantage in the first order was the aspect of focus/niche market, followed by the aspect of differentiation and the finally advantage was in terms of operating cost Leadership, and 2) the organization management strategic factors were affected toward on the competitive advantage of the hotel-resort business in Luang Prabang city include 2 factors: the operation system and management style factors; for the marketing factors were affected toward on the competitive advantage of the hotel-resort business in Luang Prabang city include 2 factors: personnel factor and physical characteristics factor; the result of these factors was the same direction.

**Keywords:** *The competitive advantage, hotel – resort Business*

## 1. ພາກສະເໜີ

ແຂວງຫຼວງພະບາງ ເປັນແຂວງໜຶ່ງທີ່ມີທ່າແຮງຫຼາຍດ້ານທີ່ສາມາດສ້າງ ແລະ ພັດທະນາອຸດສາຫະກຳການທ່ອງທ່ຽວ. ໃນໄລຍະຜ່ານມາ ພັກ ແລະລັດຖະບານ ກໍຄືອຳນາດການປົກຄອງແຂວງໄດ້ນຳພາ-ຊີ້ນຳ ແລະ ໃຫ້ການສະໜັບສະໜູນໃນການສົ່ງເສີມວຽກງານການທ່ອງທ່ຽວທີ່ຖືກກຳນົດໃຫ້ເປັນຂະແໜງການບູລິມະສິດອັນດັບໜຶ່ງ, ເປັນເສົາຄ້ຳໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໂດຍໄດ້ກຳນົດໄວ້ໃນ ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກແຂວງຫຼວງພະບາງ ໄດ້ລະບຸໄວ້ວ່າ: "ສ້າງຫຼວງພະບາງໃຫ້ກາຍເປັນສູນກາງການທ່ອງທ່ຽວທີ່ມີຄຸນະພາບລະດັບພາກພື້ນ ແລະສາກົນ" (ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ ແຂວງຫຼວງພະບາງ, 2019). ຕະຫຼອດໄລຍະທີ່ຖືເອົາການທ່ອງທ່ຽວເປັນ ຂະແໜງເສດຖະກິດປາຍແຫຼມໃນການພັດທະນາເສດຖະກິດ-ສັງຄົມ ໄດ້ເຮັດໃຫ້ເສດຖະກິດພັດທະນາດີຂຶ້ນ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ໄດ້ຮັບການຍົກລະດັບດີຂຶ້ນເປັນກ້າວໆມາເຊັ່ນ: ໂຄງລ່າງພື້ນຖານໄດ້ຮັບການປັງປຸງ, ສິ່ງຮອງຮັບ ແລະກິດຈະກຳການຕະຫຼາດທາງການທ່ອງທ່ຽວໄດ້ຮັບການພັດທະນາ ແລະສົ່ງເສີມ, ພາກລັດ ແລະ ພາກທຸລະກິດ ໄດ້ຮັບການສົ່ງເສີມໃຫ້ມີຂີດຄວາມສາມາດທາງດ້ານວິຊາການທີ່ສູງຂຶ້ນ ສິ່ງເຫຼົ່ານີ້ໄດ້ພັກດັນໃຫ້ສະພາບການທ່ອງທ່ຽວຂະຫຍາຍຕົວຢ່າງໄວວາ ແລະ ສາມາດຍາດນາມມະຍົດເມືອງທ່ອງທ່ຽວຍອດນິຍົມຂອງໂລກ 6 ປີຊ້ອນ ອັນໄດ້ເຮັດໃຫ້ນັກທ່ອງທ່ຽວເດີນທາງມາທ່ຽວຫຼວງພະບາງນັບມື້ເພີ່ມຂຶ້ນໂດຍສະເລ່ຍ 15-20% ຕໍ່ປີ (ອົງຄະນະພັກແຂວງຫຼວງພະບາງ ຄັ້ງທີ VIII, 2020). ແຂວງຫຼວງພະບາງ ມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມຈຳນວນ 576,610 ຄົນ ໃນປີ 2018, ເພີ່ມຂຶ້ນ 22% ທຽບກັບປີຜ່ານມາ ແລະສ້າງລາຍຮັບຈຳນວນ 237 ລ້ານໂດລາສະຫະລັດ (ຂະແໜງພັດທະນາການທ່ອງທ່ຽວ ແຂວງຫຼວງພະບາງ, 2019). ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ແຂວງຫຼວງພະບາງ ແມ່ນມີຈຳນວນເພີ່ມຂຶ້ນທຸກປີ, ແຕ່ເພີ່ມໃນອັດຕາທີ່ເລັກໜ້ອຍ, ບໍ່ຄົງທີ່ ແລະ ເພີ່ມຂຶ້ນໃນອັດຕາທີ່ຫຼຸດລົງໃນປີ 2016-2017 ເຊິ່ງສອດຄ່ອງກັບສະພາບການທ່ອງທ່ຽວຂອງ ສປປ ລາວ.

ນັກທ່ອງທ່ຽວທີ່ເຂົ້າມາທ່ຽວຫຼວງພະບາງ ຈຳນວນ 860,035 ເທື່ອຄົນ ໃນປີ 2019 ຖ້າທຽບໃສ່ປີ 2018 ເພີ່ມຂຶ້ນ 14% ສະເລ່ຍຄ່າໃຊ້ຈ່າຍຂອງນັກທ່ຽວ 266,530,029 ໂດລາສະຫະລັດ, ໃນປີ 2020 ພາຍຫຼັງເກີດວິກິດການແຜ່ລະບາດຂອງພະຍາດ COVID-19

ການທ່ອງທ່ຽວຂອງແຂວງຫຼວງພະບາງປະເມີນໄດ້ວ່າໃນໄລຍະ 9 ເດືອນຕົ້ນປີ 2020 ແຂວງຫຼວງພະບາງມີນັກທ່ອງທ່ຽວຫຼຸດລົງເຖິງ 64%, ໃນນັ້ນນັກທ່ອງທ່ຽວສາກົນຫຼຸດລົງ 71%, ນັກທ່ອງທ່ຽວພາຍໃນລຸດລົງ 46%, ສະເລ່ຍຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວລຸດລົງເຖິງ 50% (ພະແນກຖະແຫຼ່ງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງຫຼວງພະບາງ, 2020) ບໍ່ພຽງແຕ່ແຂວງຫຼວງພະບາງ ບັນດາແຂວງອື່ນໆທົ່ວປະເທດ ແລະ ບັນດາປະເທດທົ່ວໂລກກໍ່ໄດ້ຮັບຜົນກະທົບເຊັ່ນດຽວກັນ, ຈານວນນັກທ່ອງທ່ຽວທີ່ລຸດລົງເຮັດໃຫ້ເກີດພາວະເສດຖະກິດຖົດຖອຍ ແລະ ສົ່ງຜົນກະທົບເປັນວົງກວ້າງຕໍ່ອັດຕາການບໍລິໂພກ ແລະ ການຈ້າງງານໃນພາກບໍລິການ ເນື່ອງຈາກວ່າແຂວງຫຼວງພະບາງຖືເອົາວຽກງານການທ່ອງທ່ຽວເປັນບູລິມະສິດອັນດັບໜຶ່ງໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ເຮັດໃຫ້ໄດ້ຮັບຜົນກະທົບຢ່າງຮຸນແຮງ ຈາກພາວະຖົດຖອຍໃນອຸດສາຫະກາການທ່ອງທ່ຽວ. ພາຍຫຼັງລັດຖະບານ ຂອງ ສປປ ລາວ ໄດ້ປະກາດເປີດປະເທດຢ່າງເຕັມຮູບແບບ ໃນວັນທີ 9 ພຶດສະພາ 2022 ເປັນຕົ້ນມາ, ສະພາບການ ການທ່ອງທ່ຽວພາຍໃນແຂວງ ກໍ່ໄດ້ຄ່ອຍໆຟື້ນຟູໄປຕາມຈັງຫວະ ເນື່ອງຈາກວ່າ ແຂວງຫຼວງພະບາງ ກໍຍັງຖືເປັນຈຸດໝາຍຂອງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ເຊິ່ງສະແດງໃຫ້ເຫັນໃນປີ 2022 ມີນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມຫຼວງພະບາງທັງໝົດ 537,719 ເທື່ອຄົນ ໃນນັ້ນເປັນເປັນນັກທ່ອງທ່ຽວສາກົນ 256.86 ເທື່ອຄົນ, ນັກທ່ອງທ່ຽວພາຍໃນ 280,823ເທື່ອຄົນ ສະເລ່ຍຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວ 219,325,092 ໂດລາສະຫະລັດ (ພະແນກຖະແຫຼ່ງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ໄຕມາດ III, 2022).

ຈາກພາວະເສດຖະກິດ ແລະ ການທ່ອງທ່ຽວ ຂອງລາວ ໃນປັດຈຸບັນ ເຊິ່ງຖືໄດ້ເປັນໂອກາດທີ່ເປີດກວ້າງຫຼາຍຂຶ້ນໃນການດຳເນີນທຸລະກິດ ແຕ່ໃນເວລາດຽວກັນກໍ່ອາດຈະເປັນຄວາມສ່ຽງຕໍ່ການດຳເນີນທຸລະກິດເຊັ່ນດຽວກັນ ເຊິ່ງທຸລະກິດໃຫ້ບໍລິການທາງການທ່ອງທ່ຽວ ໂດຍສະເພາະທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ຕ່າງກໍ່ຕ້ອງໄດ້ມີການນຳກົນລະຍຸດການສ້າງຄວາມໄດ້ປຽບໃນການແຂ່ງຂັນມາໃຊ້ໃນທຸລະກິດຢ່າງເໝາະສົມ ແລະ ແຕກຕ່າງຈາກຄູ່ແຂ່ງຂັນ ໂດຍກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນ ແມ່ນມີການໃຊ້ເຄື່ອງມືໃນການວິເຄາະສະພາບແວດລ້ອມພາຍໃນທຸລະກິດ ເຊິ່ງປະກອບດ້ວຍການວິເຄາະຈຸດແຂງຈຸດອ່ອນ ໂອກາດ ແລະ ອຸປະສັກໃນການດຳເນີນທຸລະກິດ ແລະ ມີການນຳໃຊ້ສ່ວນປະສົມທາງການຕະຫຼາດ 7P's ເຊິ່ງມີທັງໝົດ 7 ເຄື່ອງມືໄດ້ແກ່: ດ້ານຜະລິດຕະພັນ/ການບໍລິການ, ດ້ານລາຄາ, ດ້ານຊ່ອງທາງການຂາຍ, ດ້ານການສົ່ງເສີມການຕະຫຼາດ, ດ້ານບຸກຄະລາກອນ ຫຼື ພະນັກງານ, ດ້ານຂະບວນການ, ດ້ານລັກສະນະທາງກາຍຍະພາບ (Kotler, 2003) ທີ່ສົ່ງຜົນຕໍ່ການນຳເຕັກນິກມາໃຊ້ໃນການສ້າງຄວາມໄດ້ປຽບໃນການແຂ່ງຂັນທີ່ອົງກອນຕ້ອງສ້າງຄວາມແຕກຕ່າງຈາກຄູ່ແຂ່ງຂັນໃນ 4 ດ້ານ ເຊິ່ງປະກອບດ້ວຍ: ດ້ານກົນລະຍຸດການສ້າງຄວາມແຕກຕ່າງ, ກົນລະຍຸດການເປັນຜູ້ນຳທາງດ້ານຕົ້ນທຶນ, ກົນລະຍຸດການຕອບສະໜອງທີ່ວ່ອງໄວ ແລະ ກົນລະຍຸດການມຸ້ງຕອບສະໜອງສະເພາະສ່ວນ (Porter & Millar, 1985) ເຊິ່ງໃນຍຸກປະຈຸບັນຄວາມໄດ້ປຽບໃນການແຂ່ງຂັນຖືໄດ້ວ່າເປັນສິ່ງຈຳເປັນສຳລັບການດຳເນີນທຸລະກິດ ເຊິ່ງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດອາດຈະເປັນໄປໄດ້ໃນຫຼາຍມິຕິ ເຊັ່ນ: ການມີນະວັດຕະກຳ, ຕຳແໜ່ງທາງການຕະຫຼາດ, ການມີລູກຄ້າຈຳນວນຫຼາຍ ແລະ ຄວາມຍາກໃນການກອບປີຮຽນແບບໃນສິນຄ້າ ຫຼື ບໍລິການ ໂດຍສະເພາະແມ່ນທຸລະກິດການໃຫ້ບໍລິການສະຖານທີ່ພັກແຮມ ທີ່ມີການແຂ່ງຂັນກັນສູງ ແລະ ມີຄູ່ແຂ່ງເພີ່ມຫຼາຍຂຶ້ນ ລວມໄປເຖິງຜູ້ບໍລິໂພກທີ່ມີທາງເລືອກທີ່ມີຫຼາຍຂຶ້ນ ຄວາມໄດ້ປຽບໃນການແຂ່ງຂັນຈຶ່ງຖືໄດ້ວ່າເປັນຕົວກຳນົດວ່າອົງກອນຈະສາມາດແຂ່ງຂັນໃນຕະຫຼາດທຸລະກິດໄດ້ ຫຼືບໍ່ ຖ້າຫາກອົງກອນມີຄວາມໄດ້ປຽບໃນການແຂ່ງຂັນທີ່ແຕກຕ່າງຈາກຄູ່ແຂ່ງຂັນ ແລະ ຍາດຕໍ່ການຮຽນແບບຈະເຮັດໃຫ້ສາມາດສ້າງຜົນກຳໄລໃຫ້ແກ່ອົງກອນໄດ້ໃນທາງກົງກົນຂ້າມຖ້າຫາກອົງກອນທຸລະກິດບໍ່ສາມາດສ້າງຄວາມໄດ້ປຽບທາງການແຂ່ງຂັນໄດ້ຍ່ອມຈະເປັນການຍາກທີ່ຈະດຳເນີນທຸລະກິດໃນຍຸກປະຈຸບັນໄດ້ສຳເລັດຜົນ.

ດ້ວຍເຫດນີ້ ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈທີ່ຈະສຶກສາ ປັດໄຈທີ່ສົ່ງຜົນຕໍ່ຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເພື່ອເປັນແນວທາງໃຫ້ຜູ້ປະກອບການທຸລະກິດໂຮງແຮມ-ຣີສອດ ສາມາດດເນີນທຸລະກິດໄດ້ປຽບສູງກວ່າຄູ່ແຂ່ງຂັນທີ່ເພີ່ມຂຶ້ນ ແລະ ເພື່ອໃຫ້ສາມາດບັນລຸເປົ້າໝາຍຕາມທີ່ທຸລະກິດຕ້ອງການໄດ້ ໂດຍຜູ້ປະກອບການຕ້ອງມີການກຳນົດປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນຂອງຕົນເອງຢ່າງເໝາະສົມກັບສະຖານະການຕ່າງໆ ເຊິ່ງຈະກໍ່ໃຫ້ເກີດປະໂຫຍດຕໍ່ການດາເນີນງານຂອງທຸລະກິດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນໃນອານາຄົດ.

## 2. ວິທີການຄົ້ນຄວ້າ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ໃຊ້ໃນການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນຜູ້ປະກອບການ ຫຼືຜູ້ບໍລິຫານທຸລະກິດບໍລິການທາງການທ່ອງທ່ຽວພາກສ່ວນໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ມີທັງໝົດ 95 ຫົວໜ່ວຍທຸລະກິດ (ຂະແໜງທ່ອງທ່ຽວ ພະແນກຖະແຫຼ່ງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2023) ແລະ ໄດ້ກຳນົດເອົາ 100% ຂອງປະຊາກອນທັງໝົດ (Cochran, 1963).

### 2.2 ເຄື່ອງມືໃນການເກັບຂໍ້ມູນ

ເນື່ອງຈາກເປັນການສຶກສາຄົ້ນຄວ້າແບບສຳຫຼວດທາງປະລິມານ (Survey Quantitative Research) ໂດຍເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນແບບສອບຖາມ (Questionnaires) ໂດຍມີຂໍ້ຄຳຖາມທີ່ເປັນແບບເລືອກຕອບຕາມລາຍການ (Check List) ແລະ ມີຄຳຖາມເປັນແບບມາດຕາສ່ວນປະມານຄ່າ 5 ລະດັບຄວາມສຳຄັນ ຕາມແບບ Likerts Scales ແລະ ໄດ້ໃຊ້ເກນໃນການແປຜົນໂດຍນຳຄ່າ

ຄະແນນສະເລ່ຍມາຈັດລຳດັບຄວາມສຳຄັນຂອງ ປັດໄຈການບໍລິຫານພາຍໃນອົງກອນ ແລະ ຄວາມໄດ້ປຽບໃນການແຂ່ງຂັນໃນແຕ່ລະດ້ານ ໃຫ້ເປັນໄປຕາມຄວາມກວ້າງຂອງຊ່ວງຄ່າຄະແນນ ຕາມແນວຄິດຂອງ ເບສ (Best, 1977) ດັ່ງລຸ່ມນີ້:

| ຄ່າຄະແນນ | ຄະແນນສະເລ່ຍ | ການແປຜົນຄວາມຫມາຍຂອງຄ່າຄະແນນສະເລ່ຍ |
|---|---|---|
| 1 | 4.21 – 5.00 | ໃຫ້ຄວາມສຳຄັນໃນການນຳໃຊ້ຫຼາຍທີ່ສຸດ; ມີຄວາມສາມາດສູງຫລາຍ |
| 2 | 3.41 – 4.20 | ໃຫ້ຄວາມສຳຄັນໃນການນຳໃຊ້ຫຼາຍ; ມີຄວາມສາມາດສູງ |
| 3 | 2.61 - 3.40 | ໃຫ້ຄວາມສຳຄັນໃນການນຳໃຊ້ປານກາງ; ມີຄວາມສາມາດປານກາງ. |
| 4 | 1.81 - 2.60 | ໃຫ້ຄວາມສຳຄັນໃນການນຳໃຊ້ໜ້ອຍ; ມີຄວາມສາມາດຕ່ຳ |
| 5 | 1.00 – 1.80 | ໃຫ້ຄວາມສຳຄັນໃນການນຳໃຊ້ໜ້ອຍທີ່ສຸດ; ມີຄວາມສາມາດຕ່ຳຫຼາຍ |

ການທົບສອບຊອກຫາຄ່າຄວາມສອດຄ່ອງຂອງເນື້ອໃນຄຳຖາມ (Content Validity) ຂອງແບບສອບຖາມມີຄ່າປະມານ 0.6 ຂຶ້ນໄປ ໂດຍໄດ້ນຳໄປທົດສອບ (Try Out) ກັບຜູ້ປະກອບການທຸລະກິດບໍລິການທາງການທ່ອງທ່ຽວອື່ນໆ ທີ່ມີສະຖານທີ່ໃຫ້ຄ້າຍຄືກັນ ໃນນະຄອນຫຼວງພະບາງ ແລະ ມີລັກສະນະຄ້າຍຄືກັນກັບກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າວິໄຈ ຈຳນວນ 30 ຫົວໜ່ວຍທຸລະກິດ ແລະ ໃນການຊອກຫາຄ່າຄວາມໜ້າເຊື່ອຖື (Reliability) ແມ່ນໄດ້ຄິດໄລ່ຈາກສູດຂອງ Cronbach’s Alpha Coefficient ໂດຍມີຄ່າເທົ່າກັບ 0.986 ເຊິ່ງເປັນຄ່າທີ່ມີຄວາມໜ້າເຊື່ອຖື ແລະ ສາມາດນຳໄປໃຊ້ໃນການຄົ້ນຄວ້າວິໄຈກັບກຸ່ມຕົວຢ່າງໄດ້ຢ່າງເໝາະສົມ ໂດຍແບ່ງອອກເປັນ 3 ສ່ວນຄື:

- ສ່ວນທີ 1: ແມ່ນຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ
- ສ່ວນທີ 2: ແມ່ນຂໍ້ມູນສະພາບການບໍລິຫານຈັດການພາຍໃນອົງກອນ ຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ.
- ສ່ວນທີ 3: ແມ່ນຂໍ້ມູນກ່ຽວກັບລະດັບຄວາມໄດ້ປຽບໃນການແຂ່ງຂັນໃນການດຳເນີນງານຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ.

### 2.3 ວິທີການເກັບກຳຂໍ້ມູນ

ຜູ້ຄົ້ນຄວ້າໄດ້ເກັບລວບລວມຂໍ້ມູນໂດຍໃຊ້ການແຈກຢາຍແບບສອບຖາມໃຫ້ຫົວໜ່ວຍທຸລະກິດບໍລິການທາງການທ່ອງທ່ຽວ ທີ່ເປັນສະຖານທີ່ໃຫ້ບໍລິການໂຮງແຮມ-ຣີສອດ ທັງໝົດຈຳນວນ 95 ສະບັບ ໂດຍເລີ່ມເກັບກຳຂໍ້ມູນ ແຕ່ເດືອນ ເມສາ 2024 - ກັນຍາ 2024 ເຊິ່ງສາມາດເກັບ ແລະ ລວບລວມຄືນໄດ້ທັງໝົດ 74 ສະບັບ ຄິດເປັນ 78% ເຊິ່ງໃຊ້ວິທີການສຸ່ມຕົວຢ່າງແບບເຈາະຈົງ (Purposive Sampling) ແລະ ແຈກຢາຍແບບສອບຖາມໃຫ້ກຸ່ມຕົວຢ່າງແບບສະດວກສະບາຍ (Convenience sampling).

### 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນນຳໃຊ້ສະຖິຕິພັນລະນາ ແລະ ສະຖິຕິອ້າງອີງ (Siljiru, 2010) ເຊິ່ງເປັນການວິເຄາະຊອກຫາຄ່າທາງສະຖິຕິຕ່າງໆ ເຊັ່ນ: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Std. Deviation) ແລະ ຄ່າສຳປະສິດສະຫະສຳພັນການຖົດຖອຍພະຫຸຄູນ (Multiple Regression Correlation Coefficient), ດ້ວຍການນຳໃຊ້ໂປຼແກມສຳເລັດຮູບທາງສະຖິຕິ SPSS version 22.0 ເພື່ອວິເຄາະຕາມຈຸດປະສົງຂອງການຄົ້ນຄວ້າດັ່ງນີ້:

**ຈຸດປະສົງທີ 1**: ການວິເຄາະຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍນຳໃຊ້ສະຖິຕິພັນລະນາ ເພື່ອວິເຄາະຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ຈຸດປະສົງທີ 2:** ການວິເຄາະປັດໄຈການບໍລິຫານຈັດການພາຍໃນອົງກອນສົ່ງຜົນຕໍ່ຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍນຳໃຊ້ສະຖິຕິອ້າງອີງ ເພື່ອວິເຄາະຫາຄ່າຄ່າສຳປະສິດສະຫະສຳພັນເພຍຊັນ (Pearson’s correlation coefficient) ເພື່ອໃຊ້ເປັນຂໍ້ມູນພື້ນຖານຂອງການວິເຄາະຫາຄ່າຄວາມສຳພັນຂອງຕົວປ່ຽນອິດສະຫຼະ ແລະ ຕົວປ່ຽນຕາມທີ່ຈະໃຊ້ໃນການພະຍາກອນຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ດ້ວຍວິທີຂອງການທົດຖອຍແບບພະຫຸພົດ (Multiple Regression Analysis) ໂດຍໃຊ້ເຕັກນິກການວິເຄາະແບບ Enter.

**2.3 ກອບແນວຄິດຂອງການຄົ້ນຄວ້າ**




ຮູບທີ 1: ສະແດງກອບແນວຄິດຂອງການຄົ້ນຄວ້າ

**3. ຜົນໄດ້ຮັບ**

ທຸລະກິດໂຮງແຮມ-ຣີສອດໃນເຂດນະຄອນຫຼວງພະບາງໃຫ້ຄວາມຄິດເຫັນວ່າການດຳເນີນງານຂອງທຸລະກິດໂດຍລວມແລ້ວແມ່ນຄວາມໄດ້ປຽບທາງການແຂ່ງຂັນໃນລະດັບສູງ ມີຄ່າສະເລ່ຍເທົ່າກັບ 4.12 ແລະ ຄ່າ Std. ເທົ່າກັບ 0.636 ເມື່ອພິຈາລະນາດ້ານຍ່ອຍແລ້ວເຫັນວ່າທຸລະກິດມີຄວາມໄດ້ປຽບທາງການແຂ່ງຂັນຢູ່ໃນລະດັບສູງຫຼາຍ ແມ່ນມີຄວາມໄດ້ປຽບໃນດ້ານການຕອບສະໜອງທີ່ວ່ອງໄວ ມີຄ່າສະເລ່ຍເທົ່າກັບ 4.22 ແລະ ຄ່າ Std. ເທົ່າກັບ 0.784 ແລະ ການດຳເນີນງານທີ່ມີຄວາມໄດ້ປຽບທາງການແຂ່ງຂັນໃນລະດັບສູງໃນລຳດັບທຳອິດແມ່ນດ້ານການເຈາະຕະຫຼາດສະເພາະສ່ວນ ມີຄ່າສະເລ່ຍເທົ່າກັບ 4.19 ແລະ ຄ່າ Std. ເທົ່າກັບ 0.691, ຮອງລົງມາແມ່ນດ້ານການສ້າງຄວາມແຕກຕ່າງ ມີຄ່າສະເລ່ຍເທົ່າກັບ 4.04 ແລະ ຄ່າ Std. ເທົ່າກັບ 0.595 ແລະ ສຸດທ້າຍແມ່ນມີຄວາມໄດ້ປຽບໃນດ້ານຕົ້ນທຶນການດຳເນີນງານ ມີຄ່າສະເລ່ຍເທົ່າກັບ 4.02 ແລະ ຄ່າ Std. ເທົ່າກັບ 0.745.

ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນ ທັງໝົດ 7 ຕົວ ແມ່ນມີຄວາມສຳພັນກັບຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ (Y) ຢູ່ໃນລະດັບສູງຫຼາຍ (R = 0.851) ແລະ ມີຄວາມສາມາດອະທິບາຍ ຫຼື ພະຍາກອນຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງໂດຍລວມໄດ້ເຖິງ 72.5% ($R^2$ = 0.725) ສ່ວນທີ່ເຫຼືອອີກ 27.5% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ 0.35096 ($SE_{EST}$ = 0.35096) ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າ: ປັດໄຈດ້ານຍຸດທະສາດ ($X_1$) ມີຄ່າ $\beta_1$ = 0.089, ປັດໄຈດ້ານໂຄງສ້າງຂອງອົງກອນ ($X_2$) ມີຄ່າ $\beta_1$ = 0.087, ປັດໄຈດ້ານລະບົບການປະຕິບັດວຽກ ($X_3$) ມີຄ່າ $\beta_3$ = 0.278, ປັດໄຈດ້ານຮູບແບບການບໍລິຫານ ($X_4$) ມີຄ່າ $\beta_4$ = 0.324, ປັດໄຈດ້ານບຸກຄະລາກອນ ($X_5$) ມີຄ່າ $\beta_5$ = 0.124, ປັດໄຈດ້ານທັກສະຄວາມຮູ້ /ຄວາມສາມາດ ($X_6$) ມີຄ່າ $\beta_6$ = 0.214 ແລະ ປັດໄຈດ້ານຄ່ານິຍົມຮ່ວມ ($X_7$) ມີຄ່າ $\beta_7$ = -0.082 ເຊິ່ງໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນ ຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ (Y) ໂດຍລວມຄື:

$$Y = -0.195 + 0.089 X_1 + 0.087 X_2 + 0.278 X_3 + 0.324 X_4 + 0.124 X_5 + 0.214 X_6 - 0.082 X_7$$

t $(-0.551)^{ns}$ $(0.765)^{ns}$ $(0.682)^{ns}$ $(2.228)^{**}$ $(2.749)^{***}$ $(1.186)^{ns}$ $(1.419)^{ns}$ $(-0.764)^{ns}$

ໝາຍເຫດ: *** ມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.01

** ມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ns ບໍ່ມີຄວາມສຳຄັນທາງສະຖິຕິ

ປັດໄຈຍຸດທະສາດການບໍລິຫານທາງການຕະຫຼາດທັງໝົດ 7 ຕົວ ແມ່ນມີຄວາມສຳພັນກັບຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ($Y_1$) ຢູ່ໃນລະດັບສູງຫຼາຍ ($R = 0.851$) ແລະ ມີຄວາມສາມາດອະທິບາຍ ຫຼື ພະຍາກອນຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງໂດຍລວມໄດ້ເຖິງ 72.5% ($R^2 = 0.725$) ສ່ວນທີ່ເຫຼືອອີກ 27.5% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ 0.35096 ($SE_{EST} = 0.35096$) ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າ: ປັດໄຈການບໍລິຫານການຕະຫຼາດດ້ານການບໍລິການ ($P_1$) ມີຄ່າ $\beta_1 = -0.002$, ປັດໄຈດ້ານລາຄາ ($P_2$) ມີຄ່າ $\beta_2 = 0.073$, ປັດໄຈດ້ານຊ່ອງທາງການບໍລິການ ($P_3$) ມີຄ່າ $\beta_3 = -0.143$, ປັດໄຈດ້ານການສົ່ງເສີມທາງການຕະຫຼາດ ($P_4$) $\beta_4 = 0.137$, ປັດໄຈດ້ານບຸກຄະລາກອນ ($P_5$) ມີຄ່າ $\beta_5 = 0.382$, ດ້ານຂະບວນການໃຫ້ບໍລິການ ($P_6$) ມີຄ່າ $\beta_6 = 0.192$, ປັດໄຈດ້ານລັກສະນະທາງກາຍຍະພາບ ($P_7$) ມີຄ່າ $\beta_7 = 0.222$ ເຊິ່ງໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ($Y_1$) ໂດຍລວມຄື:

$$Y_1 = 0.483 - 0.002\,P_1 + 0.073\,P_2 - 0.143\,P_3 + 0.137\,P_4 + 0.382\,P_5 + 0.192\,P_6 + 0.222\,P_7$$

$$t \quad (-0.551)^{ns}\ (-0.016)^{ns}\ (0.618)^{ns}\ (-1.412)^{ns}\ (1.521)^{ns}\ (3.944)^{***}\ (1.395)^{ns}\ (1.785)^{*}$$

ໝາຍເຫດ: *** ມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.01

* ມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.1

ns ບໍ່ມີຄວາມສຳຄັນທາງສະຖິຕິ

## 4. ວິພາກຜົນ

ທຸລະກິດໂຮງແຮມ-ຣີສອດໃນ ນະຄອນຫຼວງພະບາງ ໂດຍລວມແລ້ວ ແມ່ນຄວາມໄດ້ປຽບທາງການແຂ່ງຂັນໃນລະດັບສູງ ໃນນີ້ທຸລະກິດມີຄວາມໄດ້ປຽບໃນລະດັບສູງຫຼາຍ ແມ່ນມີຄວາມໄດ້ປຽບໃນດ້ານການຕອບສະໜອງທີ່ວ່ອງໄວ ແລະ ການດຳເນີນງານທີ່ມີຄວາມໄດ້ປຽບທາງການແຂ່ງຂັນໃນລະດັບສູງໃນລຳດັບທຳອິດແມ່ນດ້ານການເຈາະຕະຫຼາດສະເພາະສ່ວນ, ຮອງລົງມາແມ່ນມີຄວາມໄດ້ປຽບທາງດ້ານການສ້າງຄວາມແຕກຕ່າງ ແລະ ສຸດທ້າຍແມ່ນມີຄວາມໄດ້ປຽບໃນດ້ານຕົ້ນທຶນການດຳເນີນງານ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Singvilay (2021) ໄດ້ສຶກສາກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການ ໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໂດຍພົບວ່າ: ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການ ຢູ່ເຂດ ເທດສະບານເມືອງໄຊ ແຂວງອຸດົມໄຊ ໂດຍລວມມີຄວາມໄດ້ປຽບທາງດ້ານການແຂ່ງຂັນ ຢູ່ໃນລະດັບຫຼາຍ ເມື່ອພິຈາລະນາລະອຽດພົບວ່າລະດັບການສ້າງຄວາມໄດ້ປຽບທາງການການແຂ່ງຂັນຂອງຜູ້ປະກອບການທຸລະກິດ ບໍລິການ ຢູ່ເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ມີຄ່າສະເລ່ຍສູງສຸດ ຄື: ດ້ານຄວາມແຕກຕ່າງໃນບໍລິການ; ດ້ານຕອບສະໜອງຢ່າງວ່ອງໄວ ແລະ ດ້ານຕົ້ນທຶນຕ່ຳ ຕາມລຳດັບ ແລະ ສອດຄ່ອງກັບ Syuodomphanh (2023) ພົບວ່າຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມ ຢູ່ໃນລະດັບຫຼາຍ ເຊິ່ງມາຈາກຄວາມສາມາດໃນຕອບສະໜອງຢ່າງວ່ອງໄວ ໃນການໃຫ້ບໍລິການເໜືອກວ່າຄູ່ແຂ່ງຂັນ, ຄວາມສາມາດການເປັນຜູ້ນຳທາງຕົ້ນທຶນໃນການໃຫ້ບໍລິການຕ່ຳກວ່າຄູ່ແຂ່ງຂັນ ແລະ ຄວາມສາມາດການສ້າງຄວາມແຕກຕ່າງໃນບໍລິການທີ່ແຕກຕ່າງຈາກຄູ່ແຂ່ງຂັນ, ສອດຄ່ອງກັບ Khunthong (2017) ໄດ້ສຶກສາການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດບ້ານພັກ ໃນອຳເພີເມືອງ ແຂວງຊຽງໃໝ່ ເຊິ່ງໄດ້ຊີ້ໃຫ້ເຫັນວ່າ ທຸລະກິດມີການໃຊ້ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນດ້ານກົນລະຍຸດການສ້າງຄວາມແຕກຕ່າງໂດຍມີການນຳໃຊ້ການເພີ່ມຄຸນຄ່າໃຫ້ກັບສິນຄ້າ ແລະ ບໍລິການໃນການບໍລິຫານທຸລະກິດຫຼາຍທີ່ສຸດ, ດ້ານກົນລະຍຸດການເປັນຜູ້ນຳດ້ານຕົ້ນທຶນແມ່ນມີການກຳນົດລາຄາໃຫ້ມີຄວາມສອດຄ່ອງກັບກຸ່ມລູກຄ້າເປົ້າໝາຍທີ່ເຂົ້າມາພັກແຮມ ແລະ ດ້ານຍຸດທະສາດການຕອບສະໜອງທີ່ວ່ອງໄວ ແມ່ນມີການຕິດຕໍ່ສື່ສານຫຼາຍຊ່ອງທາງ ເຊັ່ນ: ໂທລະສັບ, ເຟດບຸກເພື່ອສ້າງຄວາມວ່ອງໄວ ເພື່ອໃຫ້ສາມາດດາເນີນທຸລະກິດໄດ້ປຽບຄູ່ແຂ່ງຂັນທີ່ເພີ່ມສູງຂຶ້ນ. ໃນນີ້ຍັງສອດຄ່ອງກັບ Pinrattananon (2012) ໄດ້ຄົ້ນຄວ້າຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການທາງການທ່ອງທ່ຽວໃນປະເທດໄທ ເຊິ່ງໄດ້ສະແດງໃຫ້ເຫັນວ່າທຸລະກິດບໍລິການທທາງການທ່ອງທ່ຽວໃນປະເທດໄທໂດຍລວມແລ້ວມີຄ;າມໄດ້ປຽບທາງການແຂ່ງຂັນໃນລະດັບສູງ ເຊິ່ງປະກອບດ້ວຍ: ຄວາມໄດ້ປຽບທາງການແຂ່ງຂັນໃນດ້ານຄວາມແຕກຕ່າງ, ດ້ານເປັນຜູ້ນຳທາງດ້ານຕົ້ນທຶນ, ດ້ານການຕອບສະໜອງທີ່ວ່ອງໄວ ແລະ ດ້ານການມຸ່ງຕອບສະໜອງຕະຫຼາດສະເພາະສ່ວນ. ນອກຈາກນີ້, ຜົນການຄົ້ນຄວ້າຍັງມີຄວາມສອດຄ່ອງກັບຜົນການສຶກສາຂອງ Thisavang et al. (2023) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງກາແຂ່ງຂັນຂອງຜູ້ປະກອບການຮ້ານຂາຍເຄື່ອງທີ່ລະລຶກໃນນະຄອນຫຼວງພະບາງ ເຊິ່ງໄດ້ພົບວ່າ: ຄວາມສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ໂດຍລວມແມ່ນຢູ່ໃນລະດັບຫຼາຍ. ໃນນັ້ນ, ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງທີ່ມີຄ່າສະເລ່ຍສູງສຸດ (ລະດັບຫຼາຍທີ່ສຸດ) ແມ່ນດ້ານການສ້າງຄວາມແຕກຕ່າງ, ຮອງລົງມາແມ່ນດ້ານຍຸດທະສາດຂອງຕົ້ນທຶນ ແລະ ດ້ານ ການຕອບສະໜອງຢ່າງວ່ອງໄວ.

ປັດໄຈຍຸດທະສາດດ້ານການບໍລິຫານຈັດການພາຍໃນອົງກອນສົ່ງຜົນຕໍ່ຄວາມໄດ້ປຽບທາງການແຂ່ງຂັນ ຂອງທຸລະກິດໂຮງແຮມ-ຣີສອດໃນນະຄອນຫຼວງພະບາງ ປະກອບມີ 2 ປັດໄຈ ຄື: ປັດໄຈດ້ານລະບົບການ

ປະຕິບັດວຽກ ແລະ ປັດໄຈດ້ານຮູບແບບການບໍລິຫານ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Lorinthavong (2020) ປັດໄຈທີ່ມີຜົນຕໍ່ຄວາມສາມາດທາງການແຂ່ງຂັນໃນການດໍາເນີນງານຂອງທຸລະກິດຂະໜາດນ້ອຍໃນເຂດເທດສະບານເມືອງຫຼວງນໍ້າທາ ແຂວງຫຼວງນໍ້າທາ ພົບວ່າ: ປັດໄຈດ້ານລະບົບບໍລິຫານງານຂອງທຸລະກິດ ສົ່ງຜົນຕໍ່ຕົວປ່ຽນຕາມຄືຄວາມສາມາດທາງການແຂ່ງຂັນຂອງທຸລະກິດຂະໜາດນ້ອຍໃນເຂດເທດສະບານເມືອງຫລວງນໍ້າທາ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Sutthichan & Suteeraroj (2012) ໄດ້ສຶກສາປັດໄຈທີ່ສົ່ງຜົນກະທົບຕໍ່ຄວາມໄດ້ປຽບທາງການແຂ່ງຂັນຂອງອຸດສາຫະກໍາສົ່ງອອກອັນຍະມະນີ ແລະ ເຄື່ອງປະດັບໃນປະເທດໄທ ເຊິ່ງພົບວ່າ: ປັດໄຈທີ່ສົ່ງຜົນກະທົບຕໍ່ຄວາມໄດ້ປຽບທາງການແຂ່ງຂັນຢ່າງມີລະດັບຄວາມສໍາຄັນທາງສະຖິຕິ ປະກອບມີ ດ້ານຄວາມສາມາດຂອງບຸກຄະລາກອນ, ດ້ານຄວາມສາມາດທາງການຕະຫຼາດ ແລະ ດ້ານຄວາມສາມາດຂອງການວິໄຈ ແລະ ພັດທະນາ ແລະ ປັດໄຈດ້ານຄວາມສາມາດໃນການບໍລິຫານຈັດການ.

ປັດໄຈການບໍລິຫານສ່ວນປະສົມທາງການຕະຫຼາດ ສົ່ງຜົນທິດທາງດຽວກັນຕໍ່ຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໂຮງແຮມ-ຣີສອດ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບມີ 2 ປັດໄຈ ຄື: ປັດໄຈດ້ານບຸກຄະລາກອນ ແລະ ປັດໄຈດ້ານລັກສະນະທາງກາຍຍະພາບ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Singvilay (2021) ໂດຍພົບວ່າ: ປັດໄຈພາຍໃນຂອງຜູ້ປະກອບການ ທີ່ມີຄວາມສໍາພັນທາງເສັ້ນຊື່ ກັບການສ້າງຄວາມໄດ້ປຽບການແຂ່ງຂັນ ຂອງຜູ້ປະກອບການທຸລະກິດບໍລິການ ໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ອະທິບາຍໄດ້ເຖິງ 43.03% ເມື່ອພິຈາລະນາປັດໄຈພົບວ່າ ມີ 4 ປັດໄຈ ທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການ ໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໄດ້ແກ່: 1) ປັດໄຈດ້ານລາຄາ, 2) ປັດໄຈດ້ານການສົ່ງເສີມການຕະຫຼາດ, 3) ປັດໄຈດ້ານຂະບວນການໃຫ້ບໍລິການ ແລະ 4) ປັດໄຈດ້ານຄວາມມີນະວັດຕະກໍາຂອງຜູ້ປະກອບການຕາມລໍາດັບ. ແລະ ສອດຄ່ອງກັບ Khunthong (2017) ໄດ້ສຶກສາການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດບ້ານພັກ ໃນອໍາເພີເມືອງ ແຂວງຊຽງໃໝ່ ເຊິ່ງໄດ້ຊີ້ໃຫ້ເຫັນວ່າ ປັດໄຈສ່ວນປະສົມທາງການຕະຫຼາດມີຜົນຕໍ່ການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດໃນດ້ານຍຸດທະສາດການສ້າງຄວາມແຕກຕ່າງ, ຍຸດທະສາດການເປັນຜູ້ນໍາດ້ານຕົ້ນທຶນ ແລະ ຍຸດທະສາດດ້ານການຕອບສະໜອງທີ່ວ່ອງໄວ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Her (2018) ໄດ້ສຶກສາຍຸດທະສາດທາງການຕະຫຼາດມີຜົນຕໍ່ຄວາມສາມາດທາງການແຂ່ງຂັນໃນການດໍາເນີນທຸລະກິດຮ້ານອາຫານໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເຊິ່ງພົບວ່າ: ຍຸດທະສາດທາງການຕະຫຼາດສົ່ງຜົນຕໍ່ຄວາມສາມາດທາງການແຂ່ງຂັນໃນລະດັບຄວາທສໍາຄັນສໍາຄັນທາງສະຖິ ປະກອບມີ: ດ້ານຜະລິດຕະພັນ, ດ້ານລາຄາ, ດ້ານຊ່ອງທາງການຈັດຈໍາໜ່າຍ, ດ້ານບຸກຄະລາກອນ ແລະ ດ້ານກາຍະພາບ. ແລະ ຍັງມີຄວາມອສດຄ່ອງກັບຜົນການຄົ້ນຄວ້າຂອງ Nakkasem & Pasunon (2018) ໂດຍຜົນການສຶກສາພົບວ່າ: ປັດໄຈສ່ວນປະສົມທາງການຕະຫຼາດຂອງທຸລະກິດບໍລິການມີຄວາມສໍາພັນເສັ້ນຊື່ກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນເຂດກຸງເທບ ປະເທດໄມ 87.5% ແລະ ປະກອບມີ ດ້ານຜະລິດຕະພັນ, ດ້ານການສ້າງ ແລະ ການນໍາສະເໜີລັກສະນະທາງກາຍຍະພາບ ແລະ ການສົ່ງເສີມການຕະຫຼາດ ທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດ. ເຊິ່ງບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ Thisavang et al. (2023) ໂດຍຊີ້ໃຫ້ເຫັນວ່າ ສ່ວນປັດໄຈສ່ວນປະສົມທາງການຕະຫຼາດທີ່ມີຄວາມສໍາພັນແບບເສັ້ນຊື່, ສົ່ງຜົນໄປໃນທິດທາງດຽວກັນ ແລະ ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດ ຫັດຖະກໍາໃນນະຄອນຫຼວງພະບາງ ໄດ້ແກ່ປັດໄຈດ້ານຜະລິດຕະພັນ

## 5. ສະຫຼຸບ

ທຸລະກິດໂຮງແຮມ-ຣີສອດໃນນະຄອນຫຼວງພະບາງ ໂດຍລວມແລ້ວ ແມ່ນຄວາມໄດ້ປຽບທາງການແຂ່ງຂັນໃນລະດັບສູງ ໃນນີ້ທຸລະກິດມີຄວາມໄດ້ປຽບໃນລະດັບສູງຫຼາຍ ແມ່ນມີຄວາມໄດ້ປຽບໃນດ້ານການຕອບສະໜອງທີ່ວ່ອງໄວ ແລະ ການດາເນີນງານທີ່ມີຄວາມໄດ້ປຽບທາງການແຂ່ງຂັນໃນລະດັບສູງໃນລໍາດັບທໍາອິດແມ່ນດ້ານການເຈາະຕະຫຼາດສະເພາະສ່ວນ, ຮອງລົງມາແມ່ນມີຄວາມໄດ້ປຽບທາງດ້ານການສ້າງຄວາມແຕກຕ່າງ ແລະ ສຸດທ້າຍແມ່ນມີຄວາມໄດ້ປຽບໃນດ້ານຕົ້ນທຶນການດໍາເນີນງານ.

ປັດໄຈຍຸດທະສາດດ້ານການບໍລິຫານຈັດການພາຍໃນອົງກອນສົ່ງຜົນຕໍ່ຄວາມໄດ້ປຽບທາງການແຂ່ງຂັນ ຂອງທຸລະກິດໂຮງແຮມ-ຣີສອດໃນນະຄອນຫຼວງພະບາງ ປະກອບມີ 2 ປັດໄຈ ຄື: ປັດໄຈດ້ານລະບົບການປະຕິບັດວຽກ ແລະ ປັດໄຈດ້ານຮູບແບບການບໍລິຫານ ສົ່ງຜົນໃນທິດທາງດຽວກັນ ແລະ ປັດໄຈການຕະຫຼາດແມ່ນປະກອບມີ 2 ປັດໄຈ ຄື: ປັດໄຈດ້ານບຸກຄະລາກອນ ແລະ ປັດໄຈດ້ານລັກສະນະທາງກາຍຍະພາບ ໂດຍເປັນປັດໄຈທີ່ສົ່ງຜົນທິດທາງດຽວກັນ ໃນລະດັບຄວາມສໍາຄັນທາງສະຖິຕິທີ່ລະດັບ 0.1.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ອົງຄະນະພັກ ແຂວງຫຼວງພະບາງ. (2020). *ບົດລາຍງານການເມືອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ແຂວງຫຼວງພະບາງ ຄັ້ງທີ VIII*. p. 11.

ພະແນກຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ. (2022). *ບົດລາຍງານສະຖິຕິການທ່ອງທ່ຽວແຂວງຫຼວງພະບາງ ໄຕມາດ III ປະຈໍາປີ 2022*.

ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ. (2020). *ບົດລາຍງານຂອງ ຖວທ ສະບັບເລກທີ 108/ຂພທ, ວັນທີ 24 ກັນຍາ 2020*.

ຂະແໜງສະຖິຕິ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. (2023). *ບົດລາຍງານສະຖິຕິຂອງທຸລະກິດໃຫ້ບໍລິການທາງການທ່ອງທ່ຽວ ແຂວງຫຼວງພະບາງ 2023*.

ຂະແໜງພັດທະນາການທ່ອງທ່ຽວ ແຂວງຫຼວງພະບາງ. (2019). *ສະຖິຕິການທ່ອງທ່ຽວແຕ່ປີ 2000-2018*.

Best, J.W. (1977). *Research in Education*. (3rd ed.). New Jersey: Prentice hall Inc.

Cochran, W. (1963). *Sampling techniques*. (2nd Ed). New York: John Wiley and Sons, Inc.

Her, J. (2018). *Strategy of Marketing mix affected the competitiveness capability of running restaurant business in Luang Prabang city*. [Final Report]. Faculty of Economic and tourism. Souphanouvong University.

Khunthong, P. (2017). *Building competitive advantage for guest house business in Muang district ChiangMai Province*. [Master theses]. Faculty of Business Administration. MaeJo University.

Lorinthavong, S. (2020). *The factor affect to the competitive compentency of Small business in Luangnamtha province*. [Final Report]. Faculty of Economic and tourism. Souphanouvong University.

Kotler, P. (2003). *Marketing Management*. (11th ed.). New Jersey: Prentice hall Inc.

Nakkasem, W., & Pasunon, P. (2018). Factors affecting the competitive advantage of service business entrepreneurs in Bangkok. *Veridian E-Journal: Silpakorn University*, *11*(1), 2147-2167.

Porter, M. E. & Millar. V. E. (1985). *How information gives you competitive advantage*. Harvard Business Review. p. 478-505.

Pinrattananon, S. (2012). *Competitive advantage and entrepreneurship effect to marketing success of Thailand tourism business*. [Master theses]. Faculty of business administration. University of Technology RAJAMANGALA ISAN.

Siljiru, T. (2010). *Research and Statistical data analysis by SPSS and AMOS*. (11th Ed). Bangkok: business R and D ordinary partnership.

Sutthichan, S., & Suteeraroj, M. (2012). Factors affected of competitive advantage of Gems and Jewelry Export Industries in Thailand. *Nakhon Phanom University Journal*, *2*(2), 39-45.

Singvilay, L., Chathavone, T., & Sifongxay, S. (2021). *Factors affecting the competitive advantage of service business entrepreneurs in the Xay District, Municipality of Oudomxay province*. [Master thesis]. Faculty of Economic and Tourism. Souphanouvong University.

Syuodomphanh, P. (2023). *Factors affective to the competitiveness of Hotel Business in Luang Prabang*. [Master thesis]. Faculty of Economic and Tourism. Souphanouvong University.

Thisavang, B., Hoongsengpha, S., & Sengchan, S. (2023). Factors affecting for competitive advantage of handicraft business in Luang Prabang City. *Souphanouvong University Journal of Multidisciplinary Research and Development*, 9(*3*), 206-213.